# Curriculum on Basic Skills in legal profession
# for enforcement and court judgement (Laos)

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 14
## Knowleges on examine and inspection of the enforcement and court judgement

ຄວາມຮູ້ທົ່ວໄປກ່ຽວກັບການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ

### 1. ຈຸດປະສົງການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ

ການຕິດຕາມກວດກາ ແມ່ນມີຈຸດປະສົງເພື່ອເຮັດໃຫ້ລັດຖະທຳມະນູນ ແລະ ກົດໝາຍມີຜົນສັກສິດ, ແກ້ໄຂບັນຫາໃນສັງຄົມໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການສະເພາະ ບໍ່ວ່າຈະເປັນການເຄື່ອນໄຫວຂອງອົງການຈັດຕັ້ງລັດ, ສັງຄົມ ຫຼື ບຸກຄົນ.

ຈຸດປະສົງຂອງການຕິດຕາມກວດກາວຽກປະຕິບັດຄຳຕັດສິນຂອງສານ ແມ່ນເຮັດແນວໃດໃຫ້ພະນັກງານຄຸ້ມຄອງ ແລະ ພະນັກງານປະຕິບັດຄຳຕັດສິນຂອງສານ ເຄື່ອນໄຫວວຽກງານຂອງຕົນຕາມພາລະບົດບາດ ແລະ ສອດຄ່ອງກັບກົດໝາຍ, ປະຕິບັດຄຳຕັດສິນຂອງສານ ໄປຕາມຂັ້ນຕອນທີ່ກຳນົດໄວ້ ບໍ່ມີການເຂົ້າຂ້າງອອກຂາ, ມີຄວາມສະເໝີພາບໃນການປະຕິບັດທຸກຄະດີ, ບໍ່ຂຶ້ນກັບມູນຄ່າຄະດີຈະໜ້ອຍ ຫຼື ຫຼາຍ ແລະ ບໍ່ຂຶ້ນກັບຖານະທາງດ້ານເສດຖະກິດ ຫຼື ຖານະທາງດ້ານສັງຄົມຂອງຄູ່ຄວາມ ໝາຍຄວາມວ່າທຸກຄະດີລ້ວນແຕ່ມີຄວາມສະເໝີພາບໃນການປະຕິບັດ ໃນເມື່ອຄຳຕັດສິນຂອງສານໃຊ້ໄດ້ເດັດຂາດແລ້ວ. ນອກຈາກນີ້ ການຕິດຕາມກວດກາ ຍັງມີຈຸດປະສົງໃຫ້ເຫັນໄດ້ດ້ານດີ ແລະ ດ້ານຄົງຄ້າງ ເພື່ອຊອກໃຫ້ເຫັນວິທີແກ້ໄຂຈັດການໃຫ້ສອດຄ່ອງ,ຮັບປະກັນໃຫ້ແກ່ການເຄື່ອນໄຫວຂອງບັນດາອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານມີການພັດທະນາຖືກຕາມມາດຖານ. ຍ້ອນແນວນັ້ນ, ການກວດກາການປະຕິບັດຄຳຕັດສິນຂອງສານກໍແມ່ນວິທີການ ຮັບປະກັນເພື່ອເພີ່ມທະວີການປະຕິບັດລະບຽບ, ວິໄນໃນການຄຸ້ມຄອງລັດຕໍ່ກັບໜ້າທີ່ການປະຕິບັດຄຳຕັດສິນຂອງສານ. ການກວດກາກໍຊ່ວຍໃຫ້ແກ່ລັດຄຸ້ມຄອງຂອງລັດ, ກຳໄດ້ຄວາມນຶກຄິດ, ຄວາມປາດຖະໜາ, ທ່າທີຂອງເປົ້າໝາຍຄຸ້ມຄອງ, ຍົກສູງຄວາມຮັບຜິດຊອບຂອງອົງການກວດກາ ແລະ ເປົ້າໝາຍຄຸ້ມຄອງໃນການປະຕິບັດໜ້າທີ່.

### 2. ປະເພດການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ

ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ປະກອບມີສອງປະເພດຄື: ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານຄະດີແພ່ງ ແລະ ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານຄະດີອາຍາ ຊຶ່ງແຕ່ລະປະເພດແມ່ນມີເປົ້າໝາຍໃນການຕິດຕາມກວດກາແຕກຕ່າງກັນ.

ເປົ້າໝາຍການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານກ່ຽວກັບຄະດີແພ່ງປະກອບມີ ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ແລະ ອົງການປະຕິບັດຄຳຕັດສິນຂອງສານ, ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານມີ ກະຊວງຍຸຕິທຳ (ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ), ພະແນກຍຸຕິທຳແຂວງ, ນະຄອນຫຼວງ,

ຫ້ອງການຍຸຕິທຳເມືອງ, ນະຄອນ. ອົງການປະຕິບັດຄຳຕັດສິນຂອງສານມີ ຫ້ອງການ ແລະ ໜ່ວຍງານປະຕິບັດຄຳຕັດສິນຂອງສານ;

ເປົ້າໝາຍຂອງການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານກ່ຽວກັບຄະດີອາຍາ ປະກອບມີ ກະຊວງປ້ອງກັນຄວາມສະຫງົບ (ກົມຕຳຫຼວດຄຸມຂັງ - ດັດສ້າງ), ປ.ກ.ສ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານທະຫານ ແລະ ອົງການປົກຄອງບ້ານ.

ໂດຍລວມແລ້ວກ່ຽວກັບການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ, ອົງການໄອຍະການປະຊາຊົນແມ່ນຕິດຕາມກວດກາດ້ວຍສອງວິທີຄື: ການຕິດຕາມກວດກາ ໂດຍການເຂົ້າຮ່ວມການປະຕິບັດຄຳຕັດສິນຂອງສານ ແລະ ການຕິດຕາມກວດກາຕາມຄຳຮ້ອງຂໍຄວາມເປັນທຳ[1].

ການຕິດຕາມກວດກາ ໂດຍການເຂົ້າຮ່ວມການປະຕິບັດຄຳຕັດສິນຂອງສານ ແມ່ນອົງການໄອຍະການປະຊາຊົນຈະແຕ່ງຕັ້ງພະນັກງານໄອຍະການທີ່ກ່ຽວຂ້ອງ ເຂົ້າຮ່ວມການປະຕິບັດຄຳຕັດສິນຂອງສານ ຕາມການເຊີນຂອງອົງການປະຕິບັດຄຳຕັດສິນຂອງສານ, ຊຶ່ງການເຂົ້າຮ່ວມດັ່ງກ່າວ ບໍ່ແມ່ນການເຂົ້າຮ່ວມໃນການປະຕິບັດຄຳຕັດສິນຂອງສານ ແຕ່ເປັນການເຂົ້າຮ່ວມເພື່ອຕິດຕາມກວດກາກ່ຽວກັບການປະຕິບັດຄຳຕັດສິນຂອງສານ ເພື່ອເຮັດໃຫ້ການປະຕິບັດດັ່ງກ່າວເປັນໄປຕາມຂັ້ນຕອນທີ່ກົດໝາຍກຳນົດໄວ້.

ການຕິດຕາມກວດກາຕາມຄຳຮ້ອງ ໝາຍເຖິງການຕິດຕາມກວດກາຂອງອົງການໄອຍະການຕາມຄຳຮ້ອງ ຫຼື ຕາມຄຳສະເໜີຂອງບຸກຄົນ ຫຼື ຜູ້ຕາງໜ້າອົງການຈັດຕັ້ງລັດ (ສະພາປະຊາຊົນຂັ້ນແຂວງ/ນະຄອນຫຼວງ), ສັງຄົມ, ນິຕິບຸກຄົນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານທີ່ຊັກຊ້າ, ປະຕິບັດບໍ່ຖືກຕ້ອງ ຫຼື ປະຕິບັດບໍ່ສອດຄ່ອງກັບກົດໝາຍ ຊຶ່ງອົງການໄອຍະການປະຊາຊົນ ກໍຄືຂະແໜງຕິດຕາມກວດກາທົ່ວໄປ ຕ້ອງໄດ້ປະສານສົມທົບກັບຫ້ອງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ເພື່ອໃຫ້ລາຍງານກ່ຽວກັບການປະຕິບັດຄຳຕັດສິນຂອງສານກ່ຽວກັບຄະດີທີ່ຖືກຮ້ອງຂໍມາ ຖ້າມີຄວາມຈຳເປັນອາດທວງເອົາສຳນວນຄະດີເພື່ອມາຄົ້ນຄວ້າພິຈາລະນາ ໃຫ້ມີຄວາມຮອບຄອບ ແລະ ພາວະວິໄສ.

## 3. ການກວດກາພາຍໃນ

ການກວດກາພາຍໃນ ໝາຍເຖິງການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ຂອງອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ຊຶ່ງປະກອບມີກະຊວງຍຸຕິທຳ,ພະແນກຍຸຕິທຳແຂວງ, ນະຄອນຫຼວງ,ຫ້ອງການຍຸຕິທຳເມືອງ, ນະຄອນ, ເທດສະບານ[2].

ໃນການຕິດຕາມກວດກາຂອງບັນດາອົງການດັ່ງກ່າວ ແມ່ນປະຕິບັດຕາມສາຍຕັ້ງຄື:

- ກະຊວງຍຸຕິທຳ ຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານໃນຂອບເຂດທົ່ວປະເທດ ໂດຍມີກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານເປັນເສນາທິການ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຕິດຕາມກວດກາ;

---

[1] ໜັງສືແຈ້ງຕອບສະບັບເລກທີ 01/ອຍກນວ.ທປ ລົງວັນທີ 11 ກຸມພາ 2021 ຂອງຂະແໜງຕິດຕາມກວດກາທົ່ວໄປ, ອົງການໄອຍະການປະຊາຊົນນະຄອນຫຼວງ

[2] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ເລກທີ 04/ສພຊ ລົງວັນທີ 25 ກໍລະກົດ 2008, ມາດຕາ 45

- ພະແນກຍຸຕິທຳແຂວງຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ຂອງຫ້ອງການ ແລະ ໜ່ວຍງານປະຕິບັດຄຳຕັດສິນຂອງສານ ພາຍໃນແຂວງຂອງຕົນ ສ່ວນພະແນກຍຸຕິທຳນະຄອນຫຼວງ ຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານຂອງຫ້ອງການ ແລະ ໜ່ວຍງານປະຕິບັດຄຳຕັດສິນຂອງສານໃນຂອບເຂດນະຄອນຫຼວງ;

- ຫ້ອງການຍຸຕິທຳເມືອງ, ນະຄອນ,ເທດສະບານຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານຂອງບັນດາໜ່ວຍງານປະຕິບັດຄຳຕັດສິນຂອງສານເມືອງ,ນະຄອນ ແລະ ເທດສະບານ.

ສິດ ແລະ ໜ້າທີ່ຂອງອົງການຕິດຕາມກວດກາພາຍໃນມີຄື:

1) ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງພະນັກງານປະຕິບັດຄຳຕັດສິນຂອງສານ;

2) ກວດກາຄວາມຮັບຜິດຊອບ, ການປະພຶດແລະ ແບບແຜນວິທີເຮັດວຽກຂອງພະນັກງານປະຕິບັດຄຳຕັດສິນຂອງສານ;

3) ກວດກາການຄຸ້ມຄອງ ແລະ ການນຳໃຊ້ລາຍຮັບ-ລາຍຈ່າຍກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ[3].

ໃນການຕິດຕາມກວດກາ ຂອງອົງການຕິດຕາມກວດກາພາຍໃນ, ໄດ້ແບ່ງການກວດກາອອກເປັນສອງກໍລະນີຄື: ການກວດກາປົກກະຕິ ແລະ ການກວດກາຕາມຄຳຮ້ອງ.

- ການກວດກາປົກກະຕິ ແມ່ນອົງການປະຕິບັດຄຳຕັດສິນຂອງສານ ຕ້ອງລາຍງານກ່ຽວກັບການປະຕິບັດຄຳຕັດສິນຂອງສານ ໃຫ້ອົງການກວດກາເປັນປົກກະຕິ ຕາມຂັ້ນຂອງຕົນ,ໂດຍສະເພາະແມ່ນການລາຍງານກ່ຽວກັບສະຖິຕິການປະຕິບັດຄຳຕັດສິນຂອງສານ, ລາຍງານກ່ຽວກັບການປະຕິບັດທາງແພ່ງ, ລາຍງານກ່ຽວກັບການມອບເງິນປັບໃໝເຂົ້າງົບປະມານລັດ, ລາຍງານກ່ຽວກັບຄະດີທີ່ຫຍຸ້ງຍາກໃນການປະຕິບັດ ແລະ ອື່ນໆ, ຊຶ່ງການລາຍງານດັ່ງກ່າວຈະລາຍງານເປັນສະເພາະຄະດີ,ເປັນໄຕມາດ, ຫົກເດືອນຕົ້ນປີ, ຫົກເດືອນທ້າຍປີ ແລະ ລາຍງານໝົດປີ.

ຕົວຢ່າງ:ຫ້ອງການປະຕິບັດຄຳຕັດສິນຂອງສານນະຄອນຫຼວງ ໄດ້ເຮັດບົດສະຫຼຸບລາຍງານຕໍ່ພະແນກຍຸຕິທຳນະຄອນຫຼວງ ກ່ຽວກັບຄະດີທີ່ມີຄວາມຫຍຸ້ງຍາກໃນການປະຕິບັດ, ສະເໜີໃຫ້ເປີດກອງປະຊຸມຮ່ວມລະຫວ່າງພາກສ່ວນທີ່ກ່ຽວຂ້ອງ ເພື່ອຊອກຫາວິທີໃນການປະຕິບັດທີ່ສອດຄ່ອງ.

- ການກວດກາຕາມຄຳຮ້ອງ ແມ່ນພາຍຫຼັງທີ່ອົງການກວດກາພາຍໃນ (ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ) ໄດ້ຮັບຄຳຮ້ອງຂອງບຸກຄົນໃດໜຶ່ງທີ່ກ່ຽວຂ້ອງກັບຄຳຕັດສິນຂອງສານ, ອົງການດັ່ງກ່າວກໍຈະແຈ້ງໃຫ້ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງລາຍງານກ່ຽວກັບການປະຕິບັດຄະດີດັ່ງກ່າວ,ອົງການປະຕິບັດຄຳຕັດສິນຂອງສານ ຈະລາຍງານສະເພາະຄະດີທີ່ອົງການຕິດຕາມກວດກາໄດ້ຮັບຄຳຮ້ອງໃຫ້ກວດກາການປະຕິບັດຄຳຕັດສິນຂອງສານ ຫຼື ການປະຕິບັດໜ້າທີ່ວຽກງານຂອງພະນັກງານປະຕິບັດຄຳຕັດສິນຂອງສານ, ຊຶ່ງພາຍຫຼັງອົງການຕິດຕາມກວດກາໄດ້ຮັບຄຳຮ້ອງຂອງບຸກຄົນ ຫຼື ນິຕິບຸກຄົນກ່ຽວກັບບັນຫາດັ່ງກ່າວແລ້ວ, ກ່ອນອື່ນຕ້ອງຄົ້ນຄວ້າຄຳຮ້ອງດັ່ງກ່າວໃຫ້ເຫັນ

---

[3] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ເລກທີ 04/ສພຊ ລົງວັນທີ 25 ກໍລະກົດ 2008, ມາດຕາ 45

ໄດ້ຈຸດປະສົງຂອງຄຳຮ້ອງ ແລ້ວປະສານສົມທົບກັບອົງການປະຕິບັດຄຳຕັດສິນຂອງສານຕາມຂັ້ນ. ຜ່ານການຄົ້ນຄວ້າຄຳຮ້ອງ ແລະ ປະສານສົມທົບແລ້ວ ອົງການຕິດຕາມກວດກາຕ້ອງອອກນິຕິກຳໃດໜຶ່ງ ໂດຍສະເພາະແມ່ນແຈ້ງການ, ຄຳສັ່ງ ຫຼື ຄຳແນະນຳ ໃຫ້ອົງການປະຕິບັດຄຳຕັດສິນຂອງສານ ເພື່ອລາຍງານຄືນກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຫຼື ເພື່ອປະຕິບັດໃຫ້ສອດຄ່ອງກັບນິຕິກຳສະເພາະ ແລະ ກົດໝາຍທີ່ກ່ຽວຂ້ອງ.

ຕົວຢ່າງ:ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ) ໄດ້ອອກແຈ້ງການສະບັບເລກທີ 168/ກຍ.ກຄສ ລົງວັນທີ 09 ເມສາ 2021ເຖິງຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງວຽງຈັນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ, ຄະດີລະຫວ່າງ ນາງ ທຸມມີ ວົງພະໄຊ (ໂຈດ), ນາງ ສີພັນ ປັດຖາວົງ (ຕາງໜ້າໂຈດ), ນາງ ຄຳສີ ເບລະຄົມ (ຈຳເລີຍ) ກ່ຽວເລື່ອງສັນຍາກູ້ຢືມ, ຊຶ່ງກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ຮັບຄຳຮ້ອງຂອງ ນາງ ມະນີຈັນ ເບລະຄົມ(ຕາງໜ້າເລີຍ) ຊຶ່ງມີຈຸດປະສົງສະເໜີໃຫ້ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຊີ້ນຳຂະແໜງຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງແຂວງວຽງຈັນໃຫ້ປະຕິບັດຄຳພິພາກສາທີ່ກ່ຽວຂ້ອງຄືນໃໝ່. ຜ່ານການຄົ້ນຄວ້າຄຳຮ້ອງດັ່ງກ່າວ ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈຶ່ງໄດ້ອອກແຈ້ງການສະບັບນີ້ໄປຍັງຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແຂວງວຽງຈັນ ເພື່ອໃຫ້ລາຍງານເປັນລາຍລັກອັກສອນລະອຽດກ່ຽວກັບການປະຕິບັດຜ່ານມາ, ຂັ້ນຕອນ ແລະ ວິທີການທີ່ຈະປະຕິບັດໃນຕໍ່ໜ້າ ພ້ອມທັງສຳເນົາເອກະສານອື່ນໆທີ່ກ່ຽວຂ້ອງກັບການປະຕິບັດຂັດຕິດບົດລາຍງານມາພ້ອມ.

**4. ການກວດກາພາຍນອກ**

ການກວດກາພາຍນອກ ຫຼື ການຕິດຕາມກວດກາພາຍນອກ ໝາຍເຖິງການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ອົງການໄອຍະການປະຊາຊົນ ຕາມການກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

- **ການກວດກາຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ແມ່ນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ, ເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດ ປະຕິບັດພາລະບົດບາດຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງບັນດາອົງການລັດ[4].

ອົງການຕົວແທນ ໝາຍເຖິງອົງການທີ່ໄດ້ຮັບມອບໝາຍສິດອຳນາດຈາກປະຊາຊົນ, ສະພາແຫ່ງຊາດ ແມ່ນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໝາຍຄວາມວ່າສະພາແຫ່ງຊາດ ເປັນຕົວແທນຂອງປະຊາຊົນລາວທັງຊາດ, ເຄື່ອນໄຫວຕາມພາລະບົດບາດຂອງຕົນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນ, ສິ່ງໃດທີ່ຂັດກັບຜົນປະໂຫຍດລວມ ກໍຄືບໍ່ສອດຄ່ອງກັບກົດໝາຍ ແມ່ນບໍ່ສາມາດກະທຳໄດ້ ແລະ ສະມາຊິກສະພາແຫ່ງຊາດກໍແມ່ນປວງຊົນລາວທັງຊາດເປັນຜູ້ປ່ອນບັດເລືອກຕັ້ງເວົ້າລວມ, ເວົ້າສະເພາະກໍແມ່ນໄດ້ຮັບການເຫັນດີຈາກປະຊາຊົນລາວບັນດາເຜົ່າ ຈຶ່ງສາມາດເຂົ້າດຳລົງຕຳແໜ່ງໃນຖານະເປັນສະມາຊິກສະພາແຫ່ງຊາດໄດ້. ນອກຈາກນີ້ ສະພາແຫ່ງຊາດຍັງເປັນອົງການສູງສຸດແຫ່ງອຳນາດລັດ ຊຶ່ງເປັນອົງການຕັດສິນບັນຫາຂອງລັດໃນລະດັບສູງສຸດ ແຕ່ກໍເພື່ອສິດ ແລະ ຜົນປະໂຫຍດລວມຂອງປະຊາຊົນລາວບັນດາເຜົ່າ.

[4] ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ເລກທີ 04/ສພຊ ລົງວັນທີ 9 ທັນວາ 2015, ມາດຕາ 2

ດັ່ງທີ່ກ່າວມາຂ້າງເທິງແລ້ວວ່າ ໜຶ່ງໃນພາລະບົດບາດຂອງສະພາແຫ່ງຊາດແມ່ນການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ, ສະນັ້ນກ່ຽວກັບການປະຕິບັດຄຳຕັດສິນຂອງສານ ສະພາແຫ່ງຊາດກໍມີພາລະບົດບາດໃນການຕິດຕາມກວດກາເຊັ່ນດຽວກັນ ໂດຍອີງຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ມີຜົນບັງຄັບໃຊ້ໃນປັດຈຸບັນ, ຊຶ່ງການຕິດຕາມກວດການີ້ ໝາຍເຖິງການຕິດຕາມກວດກາກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງພະນັກງານປະຕິບັດຄຳຕັດສິນຂອງສານກ່ຽວກັບການປະຕິບັດບັນດາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ເພື່ອໃຫ້ສອດຄ່ອງກັບບັນດານິຕິກຳດັ່ງກ່າວ, ສອດຄ່ອງກັບລະບຽບການສະເພາະ ແລະ ສອດຄ່ອງກັບກົດໝາຍ.

ສະພາແຫ່ງຊາດຕິດຕາມກວດກາການປະຕິບັດລັດຖະທຳມະນູນ, ກົດໝາຍກໍລວມເຖິງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານເຊັ່ນດຽວກັນ.

ການກວດກາຂອງສະພາແຫ່ງຊາດ ກ່ຽວກັບການປະຕິບັດຄຳຕັດສິນຂອງສານແມ່ນການຕິດຕາມກວດກາພາຍນອກ, ການຕິດຕາມກວດກາປະກອບມີສອງວິທີຄື: ການຕິດຕາມກວດກາໂດຍປົກກະຕິ ແລະ ການຕິດຕາມກວດກາຕາມຄຳຮ້ອງຂໍຄວາມເປັນທຳ.

ການຕິດຕາມກວດກາປົກກະຕິຂອງສະພາແຫ່ງຊາດກ່ຽວກັບການປະຕິບັດຄຳຕັດສິນຂອງສານ ແມ່ນພາລະບົດບາດຂອງກຳມາທິການຍຸຕິທຳ ຊຶ່ງເປັນການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍເວົ້າລວມ, ເວົ້າສະເພາະແມ່ນການຕິດຕາມກວດກາການປະຕິບັດກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງອົງການຄຸ້ມຄອງ ແລະ ອົງການປະຕິບັດຄຳຕັດສິນຂອງສານ. ໃນການຕິດຕາມກວດກາດັ່ງກ່າວ ກຳມາທິການຍຸຕິທຳ ຈະສ້າງແຜນຕິດຕາມກວດກາແຕ່ລະໄລຍະ ຕາມພາລະບົດບາດຄວາມຮັບຜິດຊອບຂອງຕົນ ເພື່ອສະເໜີຄະນະປະຈຳສະພາແຫ່ງຊາດພິຈາລະນາ,ກ່ຽວກັບການສ້າງແຜນຕິດຕາມກວດກາດັ່ງກ່າວ ອາດຈະສ້າງເປັນແຜນໄຕມາດ, ຫົກເດືອນຕົ້ນປີ, ຫົກເດືອນທ້າຍປີ ແຜນກວດກາໝົດປີ ກ່ຽວກັບການຕິດຕາມກວດກາດັ່ງກ່າວ ແມ່ນໃຫ້ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ລາຍງານກ່ຽວກັບການປະຕິບັດຄຳຕັດສິນຂອງສານເປັນອັນລວມ ແລະ ອັນສະເພາະ, ການລາຍງານເປັນອັນລວມ ແມ່ນລາຍງານກ່ຽວກັບສຳນວນຄຳຕັດສິນທີ່ຮັບເຂົ້າ ແລະ ສຳນວນຄຳຕັດສິນທີ່ສາມາດປະຕິບັດໄດ້, ສຳນວນຄຳຕັດສິນທີ່ຄ້າງປະຕິບັດ ແລະ ສາເຫດຂອງການຄ້າງປະຕິບັດ,ສ່ວນການລາຍງານເປັນອັນສະເພາະແມ່ນໃຫ້ລາຍງານ ສະເພາະຄະດີໃດຄະດີໜຶ່ງ ກ່ຽວກັບການປະຕິບັດຜ່ານມາ.

ການຕິດຕາມກວດກາຕາມຄຳຮ້ອງຂໍຄວາມເປັນທຳ ໝາຍຄວາມວ່າກຳມາທິການຍຸຕິທຳ ຈະຕິດຕາມກວດກາສະເພາະການປະຕິບັດຄຳຕັດສິນຂອງສານຄະດີໃດໜຶ່ງ ທີ່ໄດ້ຮັບຄຳຮ້ອງຂໍຄວາມເປັນທຳຈາກບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ.

ຄຳຮ້ອງຂໍຄວາມເປັນທຳທີ່ຍື່ນຕໍ່ຄະນະປະຈຳສະພາແຫ່ງຊາດ ແມ່ນຄຳຮ້ອງຂໍຄວາມເປັນທຳທີ່ບໍ່ພໍໃຈຕໍ່ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງອົງການປະຕິບັດຄຳຕັດສິນຂອງສານ, ຊຶ່ງການກວດກາ ແມ່ນເພື່ອໃຫ້ເຫັນໄດ້ວ່າອົງການປະຕິບັດຄຳຕັດສິນຂອງສານໄດ້ປະຕິບັດສອດຄ່ອງກັບຄຳຕັດສິນຂອງສານ ຫຼື ບໍ່?.

ສິດ ແລະ ໜ້າທີ່ສະເພາະກ່ຽວກັບການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ແມ່ນຕິດຕາມກວດກາ ແລະ ຄົ້ນຄວ້າກ່ຽວກັບການສ້າງ, ປັບປຸງ, ການຈັດຕັ້ງປະຕິບັດ ແລະ ການໂຈະບັນດານິຕິກຳ ຂອງອົງການໄອຍະການປະຊາຊົນ, ສານປະຊາຊົນ, ອົງການປະຕິບັດຄຳຕັດສິນຂອງສານ, ອົງການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງຂອງລັດຖະບານທີ່ຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ ແລ້ວລາຍງານກຳມາທິການ

ພິຈາລະນາ; ຮ່າງແຜນການ, ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ແຕ່ລະໄລຍະຂອງກຳມາທິການ ຕໍ່ກອງປະຊຸມຄົບຄະນະ, ກອງປະຊຸມຄະນະປະຈຳ ແລະ ກອງປະຊຸມສະພາແຫ່ງຊາດ.

ກ່ຽວກັບການຕິດຕາມກວດກາດັ່ງກ່າວ, ເມື່ອໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ, ກົມຕິດຕາມກວດກາຂົງເຂດຍຸຕິທຳ ຂອງສະພາແຫ່ງຊາດ ຕ້ອງຄົ້ນຄວ້າພາຍໃນກຳນົດ 45 ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ, ໃນການຄົ້ນຄວາຄຳຮ້ອງດັ່ງກ່າວ ຕ້ອງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນແມ່ນສານທີ່ລົງຄຳຕັດສິນ ຫຼື ຄຳພິພາກສາ, ອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ອົງການປະຕິບັດຄຳຕັດສິນຂອງສານ, ຫຼັງຈາກນັ້ນ ຈຶ່ງມີຄຳເຫັນຕໍ່ຄຳຮ້ອງດ້ວຍການອອກນິຕິກຳທີ່ຈຳເປັນ ເພື່ອເປັນບ່ອນອີງໃນການປະຕິບັດຄຳຕັດສິນຂອງສານຄື:

1)ກໍລະນີຄຳຮ້ອງບໍ່ມີເຫດຜົນ ໝາຍຄວາມວ່າອົງການປະຕິບັດຄຳຕັດສິນຂອງສານ ຫຼື ພະນັກງານປະຕິບັດຄຳຕັດສິນຂອງສານໄດ້ປະຕິບັດສອດຄ່ອງຕາມຄຳຕັດສິນຂອງສານ ແລະ ສອດຄ່ອງກັບຂັ້ນຕອນ, ວິທີການ ແລະລະບຽບກົດໝາຍແລ້ວ. ສະນັ້ນ,ຕ້ອງອອກນິຕິກຳເຫັນດີໃຫ້ອົງການປະຕິບັດຄຳຕັດສິນຂອງສານ ສືບຕໍ່ປະຕິບັດຕາມຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ອົງການປະຕິບັດຄຳຕັດສິນຂອງສານໄດ້ປະຕິບັດ ໂດຍຜ່ານອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ໃນກໍລະນີທີ່ເຫັນວ່າການປະຕິບັດດັ່ງກ່າວຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ; ພ້ອມທັງແຈ້ງໃຫ້ເຈົ້າຂອງຄຳຮ້ອງຮັບຊາບ ແລະ ແນະນຳໃຫ້ປະຕິບັດຕາມຄຳຕັດສິນ ຫຼື ຄຳພິພາກສາຂອງສານ;

2) ກໍລະນີຄຳຮ້ອງມີເຫດຜົນ ໝາຍຄວາມວ່າການປະຕິບັດຄຳຕັດສິນ ຫຼື ຄຳພິພາກສາຂອງສານບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງກັບກົດໝາຍ, ຕ້ອງອອກນິຕິກຳແຈ້ງເຖິງກະຊວງຍຸຕິທຳຊຶ່ງເປັນອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານໃນຂອບເຂດທົ່ວປະເທດ, ເພື່ອໃຫ້ກະຊວງຍຸຕິທຳອອກນິຕິກຳ ແນະນຳກ່ຽວກັບການປະຕິບັດຄຳຕັດສິນຂອງສານຕໍ່ອົງການປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງຕາມຂັ້ນ ຊຶ່ງບາງຄັ້ງອາດຈະແມ່ນການອອກຄຳແນະນຳ, ແຈ້ງການ ຫຼື ຄຳສັ່ງ ຕາມຄວາມເໝາະສົມ ແລະ ສອດຄ່ອງກັບກົດໝາຍ.

- ກໍລະນີຄຳຮ້ອງມີເຫດຜົນ ແລະ ມີຄວາມຈຳເປັນຕ້ອງມີການຮື້ຟື້ນຄະດີ ເນື່ອງຈາກຄຳຕັດສິນ ຫຼື ຄຳພິພາກສາຂອງສານບໍ່ສອດຄ່ອງກັບລະບຽບກົດໝາຍ ແລະ ມີຂໍ້ມູນຫຼັກຖານໃໝ່ທີ່ຜ່ານມາສານປະຊາຊົນທີ່ກ່ຽວຂ້ອງຍັງບໍ່ໄດ້ນຳມາພິຈາລະນາ. ໃນກໍລະນີນີ້ ກໍຕ້ອງອອກນິຕິກຳສະເໜີຕໍ່ອົງການໄອຍະການປະຊາຊົນສູງສຸດ ເພື່ອພິຈາລະນາຄົ້ນຄວ້າກ່ຽວກັບການຮື້ຟື້ນຄະດີພ້ອມກັນນັ້ນ ກໍຕ້ອງສົ່ງນິຕິກຳດັ່ງກ່າວໄປຍັງກະຊວງຍຸຕິທຳ.

- **ການຕິດຕາມກວດກາຂອງອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນແມ່ນອົງການຕິດຕາມກວດກາຂອງລັດ, ມີພາລະບົດບາດຕິດຕາມ ແລະ ກວດກາການເຄົາລົບ ແລະ ປະຕິບັດກົດໝາຍຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ພົນລະເມືອງ ເພື່ອໃຫ້ມີຄວາມຖືກຕ້ອງ, ເປັນເອກະພາບ ແລະ ສັ່ງຟ້ອງຜູ້ຖືກຫາຕາມກົດໝາຍ.

ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ແມ່ນການຕິດຕາມກວດກາການປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນຕາມທີ່ກົດໝາຍກຳນົດໄວ້.

ອົງການໄອຍະການປະຊາຊົນແມ່ນອົງການລັດທີ່ເຮັດໜ້າທີ່ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃນຂອບເຂດທົ່ວປະເທດ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍ[5].

ໃນການປະຕິບັດໜ້າທີ່ກ່ຽວກັບການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ, ອົງການໄອຍະການປະຊາຊົນສູງສຸດ ມີໂຄງປະກອບການຈັດຕັ້ງຢ່າງເປັນລະບົບ ໂດຍມີກົມໜຶ່ງທີ່ຮັບຜິດຊອບສະເພາະ ເອີ້ນວ່າກົມຕິດຕາມກວດກາທົ່ວໄປ. ກົມຕິດຕາມກວດກາທົ່ວໄປແມ່ນກົມໜຶ່ງໃນໂຄງປະກອບການຈັດຕັ້ງຂອງອົງການໄອຍະການປະຊາຊົນສູງສຸດ, ສ້າງຕັ້ງ ແລະ ຍຸບເລີກໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການຄົ້ນຄວ້າ ແລະ ຮັບຮອງຂອງຄະນະກຳມະການໄອຍະການປະຊາຊົນສູງສຸດ.

ອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງມີສິດແລະ ໜ້າທີ່ໃນການຕິດຕາມກວດກາຫ້ອງການປະຕິບັດຄຳຕັດສິນຂອງສານກ່ຽວກັບຄະດີແພ່ງ ແລະ ພະແນກຄ້າຍຄຸມຂັງ - ດັດສ້າງກ່ຽວກັບຄະດີອາຍາ. ນອກຈາກນີ້ຍັງມີສິດ ແລະ ໜ້າທີ່ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການຄຸ້ມຄອງການປະຕິບັດຄຳຕັດສິນຂອງສານກ່ຽວກັບຄະດີແພ່ງ ແລະ ກົມຕຳຫຼວດຄຸມຂັງ - ດັດສ້າງທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບກ່ຽວກັບຄະດີອາຍາ ຍ້ອນວ່າທີ່ຕັ້ງຂອງອົງການທີ່ກ່ຽວຂ້ອງແມ່ນຕັ້ງຢູ່ນະຄອນຫຼວງວຽງຈັນ.

ສຳລັບສິດແລະໜ້າທີ່ຂອງອົງການໄອຍະການປະຊາຊົນໃນການກວດກາການປະຕິບັດຄຳຕັດສິນຂອງສານມີດັ່ງນີ້:

1) ສະເໜີໃຫ້ອົງການປະຕິບັດຄຳຕັດສິນຂອງສານຂັ້ນຂອງຕົນ ລາຍງານສະພາບການປະຕິບັດຄຳຕັດສິນຂອງສານ;

2) ສະເໜີໃຫ້ອົງການປະຕິບັດຄຳຕັດສິນຂອງສານຂັ້ນຂອງຕົນ ປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງແກ່ຍາວ ຫຼື ຄ້າງຄາໃນການປະຕິບັດ ເພື່ອໃຫ້ປະຕິບັດ ແລະ ປະສານສົມທົບກັນໃນການແກ້ໄຂ;

3) ກວດກາຄວາມຖືກຕ້ອງ ຂອງການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນການປະຕິບັດກົດໝາຍ, ການຊຳລະທາງແພ່ງ, ການເກັບ ແລະ ມອບຄ່າທຳນຽມສານ, ຄ່າອາກອນ ແລະ ຄ່າປັບໃໝເຂົ້າງົບປະມານ, ການຮິບຊັບເຂົ້າເປັນຂອງລັດ;

4) ສະເໜີໃຫ້ກະຊວງຍຸຕິທຳ ຫຼື ຫ້ອງການປະຕິບັດຄຳຕັດສິນຂອງສານໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

5) ສັ່ງຟ້ອງຜູ້ບໍ່ປະຕິບັດຕາມຄຳຕັດສິນຂອງສານ ແລະ ຜູ້ລະເມີດກົດໝາຍອື່ນກ່ຽວກັບການປະຕິບັດຄຳຕັດສິນຂອງສານໃຫ້ສານປະຊາຊົນພິຈາລະນາຕັດສິນຕາມກົດໝາຍ.

ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ ລະບົບການຈັດຕັ້ງປະກອບມີຂະແໜງຕິດຕາມກວດກາທົ່ວໄປ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ແກ່ອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ ໃນການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບ, ສະກັດກັ້ນ ແລະ ຕ້ານອາຊະຍາກຳ, ການອອກນິຕິກຳ ຂອງບັນດາອົງການຈັດຕັ້ງຕ່າງໆ ແລະ ຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານໃນຂອບເຂດແຂວງ, ນະຄອນຫຼວງ ເພື່ອໃຫ້ສອດຄ່ອງຕາມກົດໝາຍ ຊຶ່ງສັງລວມແລ້ວຂະແໜງຕິດຕາມກວດກາທົ່ວໄປມີສິດແລະ ໜ້າທີ່ ສາມຢ່າງຄື: ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ, ສະກັດກັ້ນ ແລະ ຕ້ານອາຊະຍາກຳ, ຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ.

ກ່ຽວກັບສິດ ແລະ ໜ້າທີ່ໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ຂະແໜງຕິດຕາມກວດກາທົ່ວໄປຂອງອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງມີໜ້າທີ່ຫຼັກຄື:

1) ໄດ້ຮັບສຳເນົາຄຳສັ່ງໃຫ້ປະຕິບັດຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

[5] ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ເລກທີ 21/ສພຊ ລົງວັນທີ 10 ພຶດສະພາ 2017, ມາດຕາ 2

2) ສະເໜີໃຫ້ພະນັກງານປະຕິບັດຄຳຕັດສິນຂອງສານດຳເນີນວຽກງານດັ່ງນີ້:

- ລາຍງານສະພາບການປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ;

- ປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງຍັງບໍ່ທັນໄດ້ຮັບການປະຕິບັດສຳເລັດເທື່ອ;

- ກວດກາຄວາມຖືກຕ້ອງ ຂອງການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນການປະຕິບັດກົດໝາຍ, ການຊຳລະການປະຕິບັດທາງແພ່ງ, ການເກັບ ແລະ ການມອບຄ່າທຳນຽມ, ຄ່າອາກອນ, ຄ່າປັບໃໝເຂົ້າງົບປະມານ, ການຮິບຊັບ ແລະ ການຮິບວັດຖຸສິ່ງຂອງເຂົ້າເປັນຂອງລັດ ແລະ ການປະຕິບັດໂທດດັດສ້າງໂດຍບໍ່ຕັດອິດສະລະພາບ;

3) ສະເໜີໃຫ້ປັບປຸງແປງ, ລົບລ້າງ ຫຼື ໂຈະການປະຕິບັດທີ່ບໍ່ຖືກຕ້ອງຕາມຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານ[6].

**References:**


1. ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008;
2. ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ) ເລກທີ 04/ສພຊ ລົງວັນທີ 9 ທັນວາ 2015;
3. ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ເລກທີ 21/ສພຊ ລົງວັນທີ 10 ພຶດສະພາ 2017;
4. ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 09 ພຶດສະພາ 2017 ວ່າດ້ວຍການ ແລະການເຄື່ອນໄຫວຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;
5. ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 1268/ກຍ, ລົງວັນທີ 16 ພະຈິກ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງS
6. ໜັງສືແຈ້ງຕອບສະບັບເລກທີ 01/ອຍກນວ.ທປ ລົງວັນທີ 11 ກຸມພາ 2021 ຂອງຂະແໜງຕິດຕາມກວດກາທົ່ວໄປ, ອົງການໄອຍະການປະຊາຊົນນະຄອນຫຼວງ.


[6] ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ ເລກທີ 339/ອອປສ ລົງວັນທີ 24 ມິຖຸນາ 2019, ມາດຕາ 10